# ກຳລັງຊອກຫາປະກັນພັຍຄຸ້ມຄອງສຸຂະພາບແບບຟຣີ ຫຼືລາຄາຖືກ ແມ່ນບໍ່?



## ໂຄງການເຮັດວຽກແນວໃດ

**OHP Standard** ຈັດຫາປະກັນພັຍຄຸ້ມຄອງສຸຂະພາບ ແບບຟຣີ ຫຼື ມີລາຄາຖືກ ໃຫ້ແກ່ຜູ້ຢູ່ອາໄສຊາວ **Oregon** ຊຶ່ງເປັນຜູ້:

- ບໍ່ມີປະກັນພັຍຄຸ້ມຄອງສຸຂະພາບ*
- ມີອາຍຸ **19** ປີຂຶ້ນໄປ*
- ບໍ່ໄດ້ຕັ້ງທ້ອງ*
- ມີລາຍໄດ້ຈຳກັດ*

ເນື່ອງຈາກວ່າ ຈຳນວນທີ່ເປີດຮັບນັ້ນບໍ່ພຽງພໍກັບຄວາມຕ້ອງການຂອງທຸກຄົນ, ດັ່ງນັ້ນທາງ DHS ຈຶ່ງສ້າງລາຍຊື່ຄົນທີ່ຕ້ອງການຢາກຮ້ອງຂໍຮັບແຜນສຸຂະພາບ OHP Standard. ທ່ານຕ້ອງຈົດຊື່ຂອງທ່ານລົງໃນລາຍການຈອງລ່ວງໜ້າໃນລະຫວ່າງວັນທີ 28 ມົກຣາ - 29 ກຸມພາ 2008.

DHS ຈະສຸ່ມເລືອກເອົາຊື່ປະຈຳເດືອນຈາກລາຍຊື່ ໂດຍເລີ້ມສຸ່ມໃນເດືອນມີນາ. ຖ້າວ່າຊື່ຂອງທ່ານຖືກເລືອກ, ທາງ DHS ຈະສົ່ງຟອມຄຳຮ້ອງ OHP Standard ໃຫ້ທ່ານທາງໄປສະນີ. ຖ້າວ່າທ່ານຮ້ອງຂໍ ແລະມີຄຸນສົມບັດ, ທ່ານຈະໄດ້ຮັບການ ລົງທະບຽນເຂົ້າໃນແຜນສຸຂະພາບ OHP Standard.

DHS ຕ້ອງການຢາກໃຫ້ທ່ານເປັນອິດສະຫຼະ, ມີສຸຂະພາບສົມບູນແລະປອດພັຍ. ໂຄງການສຸຂະພາບ ແຫ່ງຣັຖອໍຣິກອນ ສາມາດຊ່ວຍເຮັດໃຫ້ເປັນໄປໄດ້.





## ວິທີເລີ້ມຕົ້ນ

*ມີສາມວິທີທີ່ຈະລົງຊື່ໃນລາຍຊື່ຈອງລ່ວງໜ້າ:*

**ປະກອບຄຳຮ້ອງທາງອອນລາຍ.**
ໄປທີ່ເວັບໄຊລາຍຊື່ຈອງຂອງແຜນສຸຂະພາບ OHP Standard ທີ່ www.oregon.gov/DHS/open ແລະປະກອບຂໍ້ມູນຂອງທ່ານທາງອີເລັກໂຕຣນິກນີ້.

**ສົ່ງຄຳຮ້ອງທາງໄປສະນີ.**
ປະກອບຟອມຄຳຮ້ອງຂໍຈອງລ່ວງໜ້າສຳລັບແຜນ ສຸຂະພາບOHP Standard ໃຫ້ຄົບຖ້ວນ. ມີຟອມ ໃຫ້ທ່ານທີ່ຫ້ອງການ DHS ຫຼືຫ້ອງການ AAA, ພະແນກສຸຂະພາບປະຈຳຄາວຕີ້ ແລະ ໂຮງໝໍ ແລະ ຄລີນິກສ່ວນຫຼາຍ.

**ລົງຊື່ເຂົ້າໂດຍທາງໂທຣະສັບ.**
ໂທຣ 800-699-9075 ຫຼື 503-378-7800 (TTY) ວັນຈັນ ຫາວັນສຸກ, ເວລາ 7:00 ໂມງເຊົ້າ ຫາ 7:00 ໂມງແລງ. ຖ້າວ່າ ທ່ານບໍ່ສາມາດໂທຣ ໃນລະຫວ່າງຊົ່ວໂມງທີ່ບົ່ງໄວ້ນີ້, ທ່ານສາມາດໃຫ້ ໃຜຜູ້ໜຶ່ງໂທຣແທນທ່ານ ກໍໄດ້ - ພຽງແຕ່ເຂົາເຈົ້າຕ້ອງມີຊື່, ວັນເດືອນປີເກີດ ແລະທີ່ຢູ່ທາງໄປສະນີ ຂອງທ່ານ.

**ນີ້ແມ່ນງ່າຍດາຍ ແລະຍຸຕິທັມແທ້, ເຊີນມາລົງຊື່ເຂົ້າ!**
**ການຈອງລ່ວງໜ້ານີ້ແມ່ນເປີດສະເພາະວັນທີ 28 ມົກຣາ - 29 ກຸມພາ 2008 ເທົ່ານັ້ນ.**

DHS
Oregon Department of Human Services

Oregon HEALTH PLAN

OHP 3206 (Rev. 01/2008) – Laotian

* ຂໍ້ມູນຂ້າງເທິງນີ້ແມ່ນນຳໃຊ້ໄດ້ກັບແຜນການ **OHP Standard** ເທົ່ານັ້ນ. ແຜນການຊ່ວຍເຫຼືອອື່ນໆ, ເຊັ່ນແຜນການ ປະກັນພັຍຄຸ້ມຄອງຜູ້ຍິງຖືພາ ຫຼືຜູ້ທີ່ອາຍຸຕ່ຳກວ່າ **19** ປີ, ແມ່ນມີຂໍ້ກຳນົດດ້ານເງື່ອນໄຂແຕກຕ່າງກັນ ແລະເປີດຮັບ ຕະຫຼອດ. ເພື່ອໃຫ້ຮູ້ວ່າ ທ່ານມີເງື່ອນໄຂເໝາະສົມສຳລັບແຜນການຊ່ວຍເຫຼືອອັນໃດນຶ່ງໃນຈຳນວນແຜນເຫຼົ່ານີ້ ຫຼືບໍ່ນັ້ນ, ຈົ່ງປະກອບຟອມຄຳຮ້ອງ **OHP**. ຟອມຄຳຮ້ອງ **OHP** ມີໃຫ້ທ່ານໂດຍໂທຣຂໍທີ່ເລກໂທຣ **800-359-9517** ຫຼືໄປຂໍທີ່ຫ້ອງການສາຂາ **DHS** ບ່ອນໃດກໍ່ໄດ້.